ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ສຳນັກງານໃຫຍ່

ເລກທີ: 0533 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 20 FEB 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ, ໂຮງພິມ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາແບບຟອມ-ສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາບໍລິສັດ, ໂຮງພິມ ເພື່ອເຂົ້າຮ່ວມການປະມູນລາຄາແບບຟອມ-ສິ່ງພິມ ຈຳນວນ 18 ລາຍການ ດັ່ງລາຍການລຸ່ມນີ້:

| ລ/ດ | ລາຍການ | ຂະໜາດ | ຫ/ໜ | ຈຳນວນ | ການຈັດສົ່ງ |
|---|---|---|---|---|---|
| 1 | ເຈ້ຍກາວປອກຮັດເງິນ | 18*155 ມມ<br>ການຫຸ້ມຫໍ່: 40 ກໍ້/ແກັດ | ແກັດ | 750 | 2 ຄັ້ງ: ຄັ້ງລະ 375 ແກັດ; ຫ່າງກັນ 5 ເດືອນ, ແລະ ການຊຳລະເງິນແມ່ນຕາມການຈັດສົ່ງແຕ່ລະຮອບ. |
| 2 | ເທບກາວຕິດຫົວແຊັກ | ເຈ້ຍສະຕິກເກີ້ ສີແດງກ່ານ 25 * 85 ມມ,<br>ການຫຸ້ມຫໍ່: 50 ແຜ່ນ/ຖົງ, 10 ຖົງ/ແກັດ | ຖົງ | 800 | 1 ຄັ້ງ |
| 3 | ເຈ້ຍກົດບັດຄິວ_ກໍ້ນ້ອຍ | 8*8 ຊມ, ຮູແກນ 1,5 ຊມ, ເຈ້ຍເທີມໍ 54 gsm; ການຫຸ້ມຫໍ່: 2 ກໍ້/ຖົງ, 25 ຖົງ/ແກັດ | ກໍ້ | 3,500 | 1 ຄັ້ງ |
| 4 | ເຈ້ຍເອຕິແກັດ ແບບອ່ອນ | ເຈ້ຍປອນ 55 gsm ຂະໜາດ 65*100 ມມ , ພິມ 1 ສີ 1ໜ້າ;<br>ການຫຸ້ມຫໍ່: 1.000 ໃບ/ແກັດ | ແກັດ | 35 | 1 ຄັ້ງ |
| 5 | ເຈ້ຍເອຕິແກັດ (ດ້ານຫຼັງ ຕິດມູມ) | ເຈ້ຍກ່ອງແປ້ງ-ຫຼັງເທົາ 300 gsm,<br>ຂະໜາດ 156*68 ມມ;<br>ການຫຸ້ມຫໍ່: 500 ໃບ/ຫໍ່, 5 ຫໍ່/ມັດ | ຫໍ່ | 200 | 1 ຄັ້ງ |
| 6 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 500 | ເຈ້ຍກ່ອງແປ້ງ-ຫຼັງເທົາ 300 gsm,<br>ພິມ 1ສີ 1ໜ້າ, ຂະໜາດ 156*68 ມມ,<br>ການຫຸ້ມຫໍ່: 500 ໃບ/ຫໍ່, 5 ຫໍ່/ມັດ | ຫໍ່ | 15 | 1 ຄັ້ງ |
| 7 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 1,000 | | ຫໍ່ | 45 | 1 ຄັ້ງ |
| 8 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 2,000 | | ຫໍ່ | 30 | 1 ຄັ້ງ |
| 9 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 5,000 | | ຫໍ່ | 20 | 1 ຄັ້ງ |
| 10 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 10,000 | | ຫໍ່ | 60 | 1 ຄັ້ງ |
| 11 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 20,000 | | ຫໍ່ | 40 | 1 ຄັ້ງ |
| 12 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 50,000 | | ຫໍ່ | 250 | 1 ຄັ້ງ |
| 13 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 100,000 | | ຫໍ່ | 220 | 1 ຄັ້ງ |
| 14 | ປຶ້ມຝາກລູກຫຼານ | 13*7,7 ຊມ 16+4 ໜ້າ, ພິມ 4 ສີ ເຈ້ຍປອນ 100 gsm, ໜ້າປົກເຈ້ຍລາຍຜ້າ OPALE 160 gsm<br>ການຫຸ້ມຫໍ່: 100 ຫົວ/ແພັກ, 10 ແພັກ/ແກັດ | ຫົວ | 3,000 | 1 ຄັ້ງ |
| 15 | ຊອງຂາວຍາວ | 235*102 ມມ, ພິມ 4 ສີ 1 ໜ້າ<br>ການຫຸ້ມຫໍ່: 50 ຊອງ/ແພັກ, 10 ແພັກ/ແກັດ | ຊອງ | 30,000 | 1 ຄັ້ງ |




ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | | | |
|---|---|---|---|---|---|
| 16 | ຊອງເຫຼືອງນ້ອຍ A5 | 10" * 7" ພິມ 4 ສີ 1 ໜ້າ<br>ການຫຸ້ມຫໍ່: 50 ຊອງ/ແພັກ, 10 ແພັກ/ແກັດ | ຊອງ | 20,000 | 1 ຄັ້ງ |
| 17 | ໃບແຈ້ງປະເພດເງິນຮັບ-ຝາກ | ເຈ້ຍປອນ 70 gsm, ຂະໜາດ 90*195 ມມ ພິມ 1 ສີ 1 ໜ້າ;<br>ການຫຸ້ມຫໍ່: 10 ຫົວ/ແພັກ, 5 ແພັກ/ມັດ | ຫົວ | 2,000 | 1 ຄັ້ງ |
| 18 | ແຟ້ມ ທຄຕລ | ເຈ້ຍມັນ 310 gsm ເຄືອບດ້ານ 1 ໜ້າ, 23*31 ຊມ ໄດຄັດ ພິມ 4 ສີ;<br>ການຫຸ້ມຫໍ່: 50 ອັນ/ຫໍ່, 5 ຫໍ່/ມັດ | ອັນ | 7,000 | 1 ຄັ້ງ |

**ໝາຍເຫດ:**

1. ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການຝາຍຮູບເພີ່ມຕື່ມ ສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງ 28/02/2025 ໃນໂມງລັດຖະການ.
2. ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
3. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທັງໝົດ ຫຼື ບາງລາຍການກໍ່ໄດ້, ເຊິ່ງ ທຄຕລ ຈະພິຈາລະນາເປັນແຕ່ລະລາຍການ.

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

- **<u>ເອກະສານຊອງທີ</u>** 1:

1. ປະກອບເອກະສານໃນນາມນິຕິບຸກຄົນ ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນປະຈຳປີ 2022, 2023, 2024 ແລະ ສິນຄ້າຕົວຢ່າງ.
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຈັດສົ່ງ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ (ຕາມແບບຟອມຄັດຕິດແຈ້ງເຊີນ).
3. ເອກະສານເງື່ອນໄຂຂໍ້ 1 ແລະ 2 ແມ່ນ ສົ່ງຟາຍສະແກນເຂົ້າມາທີ່ Email: procurement@bcel.com.la, ແລະ **ສິນຄ້າຕົວຢ່າງ** ແມ່ນໃຫ້ມາສົ່ງກ່ອນ ວັນທີ 28/02/2025 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

- **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນພຸດ, ທີ **12/03/2025 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ, ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/05/2025) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ/ແຊັກດັ່ງກ່າວຄືນ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດສິນຄ້າທີ່ສົມບູນ 01 ອັນ ທີ່ຖືກຕ້ອງຕາມ Spec ທີ່ ທຄຕລ ລະບຸມາ ຜ່ານຕາມ Artwork ທີ່ ທຄຕລ ກຳນົດພາຍໃນ 14 ວັນ ແລະ ຕ້ອງມີຄວາມສາມາດຈັດສົ່ງສິນຄ້າ ຈຳນວນທັງໝົດສຳເລັດພາຍໃນ 30 ວັນລັດຖະການ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………./ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ……………………

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: